ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ

ຄະນະບໍລິຫານງານສູນກາງພັກ ສະໄໝທີ XI ເລກທີ 05 /ຄບສພ

ນະຄອນຫຼວງວຽງຈັນ, ວັນທີ 5 ກັນຍາ 2023

# ມະຕິ

## ວ່າດ້ວຍສືບຕໍ່ຍູ້ແຮງການພັນລະຫະຍາຍແນວທາງປ່ຽນແປງໃໝ່ ສູ່ລວງເລິກ ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນການນຳພາ ຂອງພັກ

- ອີງຕາມມະຕິ ຂອງກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ;
- ອີງຕາມທິດຊີ້ນຳ ຂອງກອງປະຊຸມຄົບຄະນະ ຄັ້ງທີ 6 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ແລະ ກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI;

### ຄະນະບໍລິຫານງານສູນກາງພັກ ອອກມະຕິ:

ພັກປະຊາຊົນປະຕິວັດລາວ ເປັນແກນນຳໃນລະບົບການເມືອງ ຂອງລະບອບປະຊາທິປະໄຕປະຊາຊົນ, ນຳພາທົ່ວສັງຄົມ ປະຕິບັດສອງໜ້າທີ່ຍຸດທະສາດ, ສາມາດປົກປັກຮັກສາຄວາມໝັ້ນຄົງ, ເອກະລາດແຫ່ງຊາດ, ອຳນາດອະທິປະໄຕ ແລະ ພື້ນແຜ່ນດິນອັນຄົບຖ້ວນໄວ້ໄດ້ຢ່າງໜັກແໜ້ນ. ພາຍໃຕ້ການນຳພາ ຂອງພັກ ໂດຍມີປະທານ ໄກສອນ ພົມວິຫານ ເປັນຜູ້ນຳໜ້າ ທີ່ມີຄວາມສະດຸ້ງໄວ ຕໍ່ການປ່ຽນແປງ ຂອງສະພາບການໃນໄລຍະໃໝ່, ກ້າຫານ, ປະດິດສ້າງ ເພື່ອລິເລີ່ມ ແລະ ນຳພາ ພາລະກິດປ່ຽນແປງໃໝ່ ຢູ່ປະເທດເຮົາ, ບູລະນະລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມ ຢ່າງເດັດດ່ຽວໜຽວແໜ້ນ.

ແນວທາງປ່ຽນແປງໃໝ່ຮອບດ້ານມີຫຼັກການ ຂອງພັກ ໄດ້ສ້າງການຫັນປ່ຽນຢ່າງໃຫຍ່ຫຼວງ ໃນການນຳພາ ຂອງພັກ ແລະ ການຄຸ້ມຄອງ-ບໍລິຫານ ຂອງລັດ, ໂສມໜ້າ ຂອງປະເທດຊາດ ມີການຫັນປ່ຽນຢ່າງຫຼວງຫຼາຍຮອບດ້ານ. ແຕ່ໄປຄຽງຄູ່ກັນນັ້ນ, ພັກເຮົາ ກໍ່ຮັບຮູ້ວ່າ ຍັງມີຫຼາຍບັນຫາ ດ້ານທິດສະດີ ແລະ ພຶດຕິກຳທີ່ຕັ້ງຂຶ້ນ ເຊິ່ງເລັ່ງທວງໃຫ້ສືບຕໍ່ຄົ້ນຄວ້າ, ວິເຄາະ, ວິໄຈຢ່າງເລິກເຊິ່ງ ແລະ ໃຫ້ຄຳຕອບຢ່າງຈະແຈ້ງ, ທັນການ ກ່ຽວກັບການນຳພາ ຂອງພັກ ໃນການສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ, ການສ້າງເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ, ການສ້າງລັດທີ່ປົກຄອງດ້ວຍກົດໝາຍ, ບັນດາເນື້ອໃນ ແລະ ແບບວິທີນຳພາ ໃນເງື່ອນໄຂພັກກຳອຳນາດ ເຊັ່ນ: ການນຳພາ ຂອງພັກ ຕໍ່ລັດ ກໍ່ຄື ກົນໄກ ພັກນຳພາ, ລັດຄຸ້ມຄອງ ປະຊາຊົນເປັນເຈົ້າ, ບັນຫາປັບປຸງກໍ່ສ້າງພັກ-ພະນັກງານ, ການຈັດຕັ້ງ, ກົງຈັກ, ລະບອບ, ກົນໄກ, ການຄຸ້ມຄອງດ້ານລະບຽບວິໄນ ຢູ່ພາຍໃນພັກ ແລະ ອື່ນໆ.

ດ້ວຍເຫດນັ້ນ, ພັກເຮົາ ຈຳເປັນຕ້ອງສືບຕໍ່ຍຶດໝັ້ນ ແລະ ຍູ້ແຮງການພັນລະຫະຍາຍແນວທາງປ່ຽນແປງໃໝ່ ຢູ່ປະເທດເຮົາ ໃຫ້ເຂົ້າສູ່ລວງເລິກ, ສືບຕໍ່ສ້າງພື້ນຖານດ້ານແນວຄິດ, ທິດສະ



สแกนด้วย CamScanner
สแกนด้วย CamScanner
ສະແກນດ້ວຍ CamScanner

ດີ ທີ່ຈະແຈ້ງ, ຮັດກຸມ ແລະ ເປັນລະບົບກວ່າເກົ່າ ໃຫ້ແກ່ການນຳພາ ພາລະກິດປະຕິວັດ ຂອງພັກເຮົາ ໃນຊຸມປີຕໍ່ໆໄປ.

**1. ທັດສະນະຊີ້ນຳ ຂອງພັກ**

1). ພັກເຮົາ ຍາມໃດກໍ່ຖືວ່າ ການປ່ຽນແປງໃໝ່ ແມ່ນພາລະກິດປະຕິວັດອັນເລິກເຊິ່ງ ທີ່ຕ້ອງດຳເນີນການຢ່າງຍາວນານ, ຕໍ່ເນື່ອງ. ສະນັ້ນ ຈຶ່ງຕ້ອງກຳແໜ້ນທັດສະນະຍຶດໝັ້ນໃນອັນທີ່ເປັນຫຼັກການ, ທັງຕ້ອງປະດິດສ້າງ, ຕໍ່ຍອດ ແລະ ເສີມຂະຫຍາຍ ແລະ ມີການບຸກທະລຸຢ່າງແຂງແຮງ ໃນເງື່ອນໄຂສະພາບການໃໝ່;

2). ສ້າງການຫັນປ່ຽນ ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ເປັນວິທີການຍູ້ແຮງການປ່ຽນແປງໃໝ່ ເຊິ່ງຕ້ອງດຳເນີນໄປຢ່າງຮອບຄອບ, ທັງມີຄວາມຕັດສິນໃຈເດັດດ່ຽວໝຽວແໜ້ນ ໂດຍນຳໃຊ້ບັນດາຮູບການ, ວິທີການ, ມາດຕະການ ແລະ ຂັ້ນຕອນທີ່ເໝາະສົມ, ບໍ່ອັດຕະວິໄສ, ບໍ່ສ້າງບັນຫາທີ່ອາດກໍ່ໃຫ້ເກີດມີຄວາມບໍ່ສະຫງົບ, ຄວາມວຸ່ນວາຍ ພາຍໃນພັກ ແລະ ສັງຄົມ; ຕ້ອງຮຽນຮູ້-ຮັບເອົາອັນໃໝ່ ຢ່າງມີການເລືອກເຟັ້ນ ແລະ ປະດິດສ້າງ, ຕ້ານ ແລະ ແກ້ໄຂແນວຄິດຮັກສາເດີມ, ອິດອາດຊັກຊ້າ, ບໍ່ຍອມປ່ຽນແປງ;

3). ຍົກສູງນ້ຳໃຈຮັກຊາດ ຕິດພັນກັບການຮັກລະບອບໃໝ່, ຈິດໃຈເອກະລາດ, ເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ທັງເພີ່ມທະວີຄວາມສາມັກຄີ, ເປັນເອກະພາບລະດັບສູງ ທາງດ້ານການເມືອງ, ແນວຄິດ ແລະ ການຈັດຕັ້ງ; ເພີ່ມທະວີການຄຸ້ມຄອງດ້ານລະບຽບວິໄນທີ່ເຂັ້ມງວດ, ເຮັດໃຫ້ກາຍເປັນວັດທະນະທຳການເມືອງໃໝ່ ຂອງພັກເຮົາ;

4). ສືບຕໍ່ຍູ້ແຮງການປ່ຽນແປງໃໝ່ດ້ານເສດຖະກິດ-ການເງິນ, ເສີມຂະຫຍາຍແບບແຜນໄລ່ລຽງເສດຖະກິດ-ໄລ່ລຽງປະສິດທິພົນ; ສ້າງເສດຖະກິດເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ; ຮັບປະກັນຄວາມສົມສ່ວນ ລະຫວ່າງການພັດທະນາເສດຖະກິດ ກັບການພັດທະນາສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ;

5). ຕ້ອງປ່ຽນແປງໃໝ່ແບບແຜນນຳພາ ຂອງພັກ ແລະ ລະບົບການປົກຄອງ ໃຫ້ຖືກຕ້ອງຕາມຫຼັກວິທະຍາສາດ ແລະ ສອດຄ່ອງກັບຈຸດພິເສດ ຂອງປະເທດເຮົາ; ຕ້ອງແຍກໃຫ້ແຈ້ງ ແລະ ເຄົາລົບຢ່າງເຂັ້ມງວດ ທີ່ຕັ້ງ, ບົດບາດການນຳພາ ຂອງພັກ ກັບການຄຸ້ມຄອງ-ບໍລິຫານ ຂອງລັດ;

6). ແກ້ໄຂບັນຫາຄົນ ແລະ ການເລືອກເຟັ້ນຄົນ ໃຫ້ຖືກຕ້ອງ ແລະ ຮັບປະກັນຫຼັກວິທະຍາສາດ; ເດັດດ່ຽວແກ້ໄຂ ພະຍາດອາຍາສິດ, ທ້ອງຖິ່ນ, ຈຸ້ມເຈື້ອເຊື້ອສາຍ, ກຸ່ມພົນປະໂຫຍດ ໃນວຽກງານພະນັກງານ;

7). ຍົກສູງປະສິດທິພາບ ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຕາມທິດສ້າງລັດທີ່ປົກຄອງດ້ວຍກົດໝາຍ ຂອງປະຊາຊົນ ໂດຍປະຊາຊົນ ເພື່ອປະຊາຊົນ ພາຍໃຕ້ການນຳພາຂອງພັກ;

8). ສ້າງຮາກຖານພັກ ໃຫ້ເຂັ້ມແຂງ, ໜັກແໜ້ນ, ເປັນກຳລັງແຮງ ໃຫ້ແກ່ການຂັບເຄື່ອນ ຂອງລະບົບການເມືອງຢູ່ແຕ່ລະຂັ້ນ; ເສີມຂະຫຍາຍສິດເປັນເຈົ້າ ຂອງປະຊາຊົນ, ສ້າງເງື່ອນໄຂໃຫ້ປະຊາຊົນ ເຂົ້າຮ່ວມການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຕາມທິດ ປະຊາຊົນຮູ້, ປະຊາຊົນປຶກສາຫາລື, ປະຊາຊົນເຮັດ, ປະຊາຊົນ ກວດກາ ແລະ ປະຊາຊົນໄດ້ຊົມໃຊ້ໝາກຜົນ;



สแกนด้วย CamScanner
สแกนด้วย CamScanner
ສະແກນດ້ວຍ CamScanner

9). ເພີ່ມທະວີການນຳພາ ເດັດຂາດ, ໂດຍກົງ, ຮອບດ້ານ ຂອງພັກ ຕໍ່ກຳລັງປະກອບອາວຸດປະຕິວັດ ເພື່ອໃຫ້ເປັນກຳລັງທີ່ປອດໃສ, ເຂັ້ມແຂງ, ໜັກແໜ້ນ, ມີແບບແຜນ ແລະ ທັນສະໄໝ ຕິດພັນກັບການພັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ແນວທາງ, ນະໂຍບາຍ ການຕ່າງປະເທດທີ່ຄ່ອງແຄ້ວ, ມີຫົວພິບ ເພື່ອຮັບປະກັນຄວາມໝັ້ນຄົງ ແລະ ຜົນປະໂຫຍດແຫ່ງຊາດ, ສ້າງເງື່ອນໄຂສະພາບແວດລ້ອມທີ່ເອື້ອອຳນວຍ ໃຫ້ແກ່ການພັດທະນາປະເທດຊາດ.

**2. ທິດທາງ ໃນຕໍ່ໜ້າ**

2.1. ໃນໄລຍະ 5-10 ປີຕໍ່ໜ້າ ຕ້ອງນຳພາ ໄປຕາມທິດທາງ ແລະ ສູ້ຊົນບັນລຸເປົ້າໝາຍ, ຄາດໝາຍໃຫຍ່ ດັ່ງລຸ່ມນີ້:

1). ຍົກສູງຄຸນນະພາບຊີວິດຂອງປະຊາຊົນໃຫ້ສູງຂຶ້ນ, ຮັບປະກັນສະຖຽນລະພາບການເມືອງ ຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບສຸກ, ມີຄວາມສາມັກຄີເປັນປຶກແຜ່ນ, ປະເທດຊາດ ຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ;

2). ພັກ ສືບຕໍ່ສ້າງພື້ນຖານອັນໜັກແໜ້ນ ໃຫ້ແກ່ການກຳອຳນາດ ຢ່າງໝັ້ນແກ່ນທີ່ບໍ່ມີອິດທິກຳລັງໃດໆ ມາສັ່ນຄອນໄດ້; ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກປະຊາຊົນ ແລະ ມີຄວາມເຊື່ອໝັ້ນສັດທາຕໍ່ພັກ; ສາມາດແກ້ໄຂ ການຍັກຍອກ, ການຟຸມເຟືອຍ, ການສໍ້ລາດບັງຫຼວງ ຢ່າງແຂງແຮງ ແລະ ເປັນຮູບປະທຳ; ສ້າງໄດ້ຜູ້ສືບທອດຍຸດທະສາດທີ່ໜັກແໜ້ນ ແລະ ເປັນລະບົບຕໍ່ເນື່ອງ;

3). ເສດຖະກິດ ມີຄວາມເຂັ້ມແຂງ, ເປັນເຈົ້າຕົນເອງນັບມື້ພົ້ນເດັ່ນ, ຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໄດ້ຮັບການແກ້ໄຂຢ່າງຈະແຈ້ງ, ບໍ່ສ້າງໜີ້ສິນທີ່ໜັກໜ່ວງ; ການຄຸ້ມຄອງ-ບໍລິຫານ ເສດຖະກິດ ດຳເນີນໄປຖືກຕ້ອງຕາມກົນໄກຕະຫຼາດ ທີ່ມີການນຳພາ ຂອງພັກ, ການດັດສົມ, ຄຸ້ມຄອງ ຂອງລັດ ຢ່າງເຂັ້ມງວດ;

4). ຊັບພະຍາກອນມະນຸດ ໄດ້ຮັບການກໍ່ສ້າງ ແລະ ພັດທະນາ, ສາມາດຕອບສະໜອງໃຫ້ແກ່ການສ້າງສາປະເທດ ໃນເງື່ອນໄຂໃໝ່, ກຸ່ມແຖວນັກຮຽນຮູ້-ປັນຍາຊົນ ໄດ້ປະກອບສ່ວນເຂົ້າໃນການຄົ້ນຄວ້າ, ການປະດິດສ້າງໃໝ່ ໃຫ້ແກ່ປະເທດຊາດ ນັບມື້ນັບຫຼາຍ ແລະ ໂດດເດັ່ນຂຶ້ນ;

5). ພື້ນຖານບ່ອນອີງດ້ານທິດສະດີ ແລະ ພຶດຕິກຳ ໃນການບູລະນະລະບອບປະຊາທິປະໄຕປະຊາຊົນ ກໍຄື ການກໍ່ສ້າງສັງຄົມນິຍົມ ຢູ່ ສປປ ລາວ ໄດ້ຮັບການສ້າງຂຶ້ນຢ່າງເປັນລະບົບ ຈະແຈ້ງ ແລະ ໜັກແໜ້ນ;

6). ການຈັດຕັ້ງເຄື່ອນໄຫວວຽກງານການຕ່າງປະເທດຢ່າງຫ້າວຫັນ, ໄດ້ຮັບຄວາມເຊື່ອໝັ້ນ, ສະໜັບສະໜູນ ແລະ ຊ່ວຍເຫຼືອຈາກເພື່ອນມິດ ໃນຂອບການຮ່ວມມືສອງຝ່າຍ, ຫຼາຍຝ່າຍ ແລະ ມີບົດບາດພົ້ນເດັ່ນ ໃນເວທີພາກພື້ນ ແລະ ສາກົນ ຫຼາຍຂຶ້ນຕື່ມ.

2.2. ວຽກງານຈຸດສຸມ:

2.2.1. ເພີ່ມທະວີການຊີ້ນຳຄົ້ນຄວ້າ, ວິເຄາະ, ວິໃຈ, ກະກຽມ ບັນຫາສຳຄັນຈຳນວນໜຶ່ງ ເພື່ອເປັນພື້ນຖານໃຫ້ແກ່ການປັບປຸງລັດຖະທຳມະນູນ, ກົດໝາຍ, ລະບຽບການ, ລະບອບກົນໄກ, ກົງຈັກ, ການຈັດຕັ້ງ ນຳພາ, ຄຸ້ມຄອງ ຂອງພັກ ແລະ ລັດຖະ ໃຫ້ສາມາດຕົກລົງຮັບຮອງ ແລະ ນຳເຂົ້າສູ່ການຈັດຕັ້ງປະຕິບັດ ພາຍຫຼັງກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ໃນປີ



สแกนด้วย CamScanner
สแกนด้วย CamScanner
ສະແກນດ້ວຍ CamScanner

2026 ດັ່ງນີ້:

1). ເພີ່ມທະວີວຽກງານແນວຄິດ-ທິດສະດີ ຂອງພັກ: ສຸມໃສ່ຄົ້ນຄວ້າ, ກຳນົດໃຫ້ແຈ້ງບັນຫາທີ່ເປັນຍຸດທະສາດ ກ່ຽວກັບທິດທາງ, ໄລຍະທາງ, ບາດກ້າວເດີນ ຂອງການສືບຕໍ່ປູລະບະລະບອບປະຊາທິປະໄຕປະຊາຊົນ ຕາມທິດສັງຄົມນິຍົມ ເປັນຕົ້ນແມ່ນສ້າງໂຄງການການເມືອງ ສະບັບທີ 3 ໃຫ້ສຳເລັດ ແລະ ສາມາດຮັບຮອງໃນກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ; ສືບຕໍ່ຄົ້ນຄວ້າ ແລະ ຮັບຮອງ ແນວຄິດໄກສອນ ພົມວິຫານ ກໍ່ຄື ພົນການຄົ້ນຄວ້າ, ສະຫຼຸບທິດສະດີ-ພຶດຕິກຳ ໃນການສ້າງປະກົມປັດໃຈ ເພື່ອກ້າວເດີນສູ່ຈຸດໝາຍສັງຄົມນິຍົມ; ພ້ອມນັ້ນ ກໍ່ສະຫຼຸບການປະຕິບັດແນວທາງປ່ຽນແປງໃໝ່ ຮອບດ້ານ ມີຫຼັກການ ຂອງພັກ ແລະ ການຮັບຮອງເອົາວັນເລີ່ມຕົ້ນປ່ຽນແປງໃໝ່ ຕິດພັນກັບການກະກຽມເນື້ອໃນກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ.

**2). ສືບຕໍ່ຍູ້ແຮງການປັບປຸງກໍ່ສ້າງພັກ ໃຫ້ປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ, ຍົກສູງຄວາມສາມາດນຳພາ ແລະ ລັກສະນະນຳໜ້າຂອງພັກ ໃຫ້ພົ້ນເດັ່ນຍິ່ງຂຶ້ນ, ປ່ຽນແປງໃໝ່ວິທີການ, ກົນໄກ ດ້ານການຈັດຕັ້ງ ຂອງພັກ.**

ຖືສຳຄັນ ແລະ ປະຕິບັດ ລະບອບຄົ້ນຄວ້າ, ຮ່ຳຮຽນ ທິດສະດີ, ແນວທາງ, ແຜນນະໂຍບາຍ ຂອງພັກ, ທິດຊີ້ນຳ ຂອງສູນກາງພັກ ໃຫ້ແກ່ຄະນະພັກ, ສະມາຊິກພັກ ໃຫ້ເປັນປະຈຳຢ່າງໜ້ອຍປີລະ 2 ເທື່ອ ເພື່ອສ້າງຄວາມເປັນເອກະພາບທາງດ້ານແນວຄິດ ແລະ ການກະທຳ ໃຫ້ເປັນລະບົບ, ປົກປ້ອງແນວທາງ, ປົກປ້ອງພື້ນຖານແນວຄິດ-ທິດສະດີ ຂອງພັກ, ຕໍ່ສູ້ຕ້ານກັບທັດສະນະຜິດຂວາ, ແນວຄິດອະຄະຕິ, ແນວຄິດປໍລະປັກ, ແນວຄິດຜູ້ພະລິດນ້ອຍ ແລະ ການຫັນປ່ຽນດ້ວຍຕົນເອງ;

ຄົ້ນຄວ້າກຳນົດຄືນໃໝ່ ດ້ານຈຳນວນຄະນະບໍລິຫານງານພັກ ນັບທັງກຳມະການຄະນະປະຈຳພັກ ຢູ່ບັນດາອົງຄະນະພັກ ໃຫ້ມີຄວາມສົມສ່ວນ ດ້ານຈຳນວນ ກັບ ຄຸນນະພາບ ຂອງບຸກຄະລາກອນ, ໃນນີ້ ຄະນະພັກແຕ່ລະຂັ້ນ ຕ້ອງສຸມໃສ່ສ້າງພະນັກງານສືບທອດປ່ຽນແທນຕຳແໜ່ງເລຂາຄະນະພັກຂັ້ນ ຂອງຕົນ; ເພີ່ມກຳມະການສຳຮອງສູນກາງພັກ ເພື່ອເປັນການຝຶກຝົນຫຼໍ່ຫຼອມ, ທົດສອບຄົນຮຸ່ນໃໝ່ ກະກຽມສ້າງພະນັກງານ ສືບທອດປ່ຽນແທນທີ່ມີຄຸນນະພາບ ແລະ ເປັນລະບົບ;

ເພີ່ມທະວີການນຳພາຊີ້ນຳຢ່າງເດັດດ່ຽວ ແລະ ເອົາຈິງເອົາຈັງໃນການປ້ອງກັນ, ຕ້ານ, ສະກັດກັ້ນ ປະກົດການຫຍໍ້ທໍ້, ພະຍາດອາຍາສິດ, ການສໍ້ລາດບັງຫຼວງ ໃຫ້ເດັດຂາດແຕ່ເທິງລົງລຸ່ມ; ສະມາຊິກພັກ, ພະນັກງານ ທຸກຄົນ ຕ້ອງໃຫ້ເຂົ້າເຖິງການກວດກາ ແລະ ສ້າງເງື່ອນໄຂໃຫ້ການກວດກາເຂົ້າເຖິງໄດ້ ແລະ ທຸກຄົນມີພັນທະ ປະຕິບັດຢ່າງສະເໝີພາບ ຕໍ່ໜ້າກົດລະບຽບຂອງພັກ ແລະ ກົດໝາຍ ຂອງລັດ ຢ່າງເຂັ້ມງວດ ຕໍ່ການລົງວິໄນ ຫຼື ການລົງໂທດ ທີ່ມີພົນຍ້ອນຫຼັງຕໍ່ສະຖານະພາບ ຂອງພະນັກງານ, ລັດຖະກອນ ທີ່ກະທຳຜິດ;

ຄຽງຄູ່ກັບການດຳເນີນການກວດກາ ຢ່າງປົກກະຕິຕໍ່ເນື່ອງ ແລະ ແຂງແຮງ, ໃຫ້ສິດຄະນະກວດກາໃນການກວດກາ ຕໍ່ການຈັດຕັ້ງ ແລະ ບຸກຄົນ ໃນການຈັດຕັ້ງ ຂອງລະບົບການເມືອງ ໂດຍບໍ່ມີຂອບເຂດຈຳກັດ; ພ້ອມນັ້ນ ຄະນະກວດກາຂັ້ນເທິງ ສາມາດກວດກາຂ້າມຂັ້ນໃນກໍລະນີຄະນະກວດກາຂັ້ນລຸ່ມ ບໍ່ປະຕິບັດໜ້າທີ່ ຫຼື ປະຕິບັດບໍ່ຖືກພາລະບົດບາດ ທີ່ເປັນການ



สแกนด้วย CamScanner
สแกนด้วย CamScanner
ສະແກນດ້ວຍ CamScanner

ສິ່ງພິມກະທົບຢ່າງຫຼວງຫຼາຍ ແລະ ຮ້າຍແຮງ; ເພີ່ມທະວີບົດບາດ ຂອງສື່ມວນຊົນໃນການເຜີຍແຜ່ຜົນ ຂອງການກວດສອບ, ຜົນຂອງການກວດກາ ແລະ ການແກ້ໄຂ ຜົນຂອງການກວດສອບ, ກວດກາ ກໍ່ຄື ການລົງວິໄນ, ການລົງໂທດ ຕໍ່ຜູ້ກະທຳຜິດ.

**3). ສືບຕໍ່ຍູ້ແຮງການປະຕິບັດທິດນຳສ້າງການຫັນປ່ຽນ ແຂງແຮງ, ເລິກເຊິ່ງ ໃນວຽກງານພະນັກງານ**, ກ່ອນອື່ນໝົດ ໄປຄຽງຄູ່ກັບການສ້າງແຜນກຳນົດພະນັກງານນຳພາຄຸ້ມຄອງແຕ່ລະຂັ້ນ ເພື່ອຊອກໃຫ້ໄດ້ຜູ້ດີເດັ່ນ ແລະ ຜູ້ເກັ່ງແທ້ ເຂົ້າໃນແຜນກໍ່ສ້າງໃຫ້ເປັນລະບົບແລ້ວ, ຍັງຕ້ອງສ້າງແຜນກຳນົດພະນັກງານນຳພາຄຸ້ມຄອງຂັ້ນຍຸດທະສາດ (ກຳມະການສູນກາງພັກ, ເລຂາທິການສູນກາງພັກ, ກົມການເມືອງສູນກາງພັກ) ຕື່ມອີກ;

ເດັດດ່ຽວແກ້ໄຂບັນຫາພະນັກງານເສື່ອມຖອຍດ້ານຄຸນສົມບັດ, ສືບທຳປະຕິວັດ ໃຫ້ເຂັ້ມງວດ, ບໍ່ປະໄວ້ໃຫ້ໝົດສະໄໝ ຈຶ່ງປັບປຸງ, ໄປພ້ອມກັບນັ້ນ ກໍ່ຕ້ອງຊຸກຍູ້ສົ່ງເສີມຜູ້ມີຫົວຄິດປະດິດສ້າງ ແລະ ເຮັດແທ້ທຳຈິງ ແລະ ມີມາດຕະການແກ້ໄຂ ຜູ້ບໍ່ເຮັດ ຫຼື ຜູ້ເຮັດບໍ່ໄດ້ ຕ້ອງຫຼີກທາງໃຫ້ຜູ້ອື່ນທີ່ມີຄວາມສາມາດກວ່າ ປ່ຽນແທນ;

ປັບປຸງລະບອບ, ລະບຽບການ, ກົນໄກ ການເລືອກເຟັ້ນ, ຄັດຈ້ອນ ແລະ ການປະເມີນຜົນ, ການສອບເສັງເລື່ອນຕຳແໜ່ງບໍລິຫານ, ຕຳແໜ່ງວິຊາການ ແຕ່ລະຂັ້ນ ໃຫ້ຮັດກຸມ, ເຂັ້ມງວດ, ຖືກຫຼັກການ ແລະ ເປັນທຳ ເພື່ອແກ້ໄຂບັນຫາເລືອກເຟັ້ນພະນັກງານຜິດ-ພະນັກງານຂາດຄຸນສົມບັດ, ພະນັກງານຂາດຄວາມສາມາດ; ກຳນົດໃຫ້ໄດ້ມາດຕະຖານວຽກ ຂອງແຕ່ລະກົມກອງ ຢູ່ແຕ່ລະຂັ້ນ;

ກຳນົດກົນໄກ, ລະບອບ ການເຄື່ອນຍ້າຍບ່ອນເຮັດວຽກ ຕາມສາຍຕັ້ງ ກໍ່ຄື ຕາມທິດຫັນລົງຮາກຖານ ແລະ ຫັນພະນັກງານທີ່ມີຜົນງານໂດດເດັ່ນ ແລະ ໜັກແໜ້ນ ຈາກທ້ອງຖິ່ນ-ຮາກຖານ ຂຶ້ນມາຢູ່ຂັ້ນກົດຕົນ ແລະ ຂັ້ນສູນກາງ.

**4). ປ່ຽນແປງໃໝ່ ບາງດ້ານ ກ່ຽວກັບກົນໄກ, ກົງຈັກ, ການຈັດຕັ້ງພັກ-ລັດ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ:**

ເພື່ອຍົກສູງບົດບາດການນຳພາຂອງພັກ, ຕ້ອງປ່ຽນແປງໃໝ່ ກົນໄກການນຳພາ ຂອງພັກ, ໃນນີ້ ເລຂາຄະນະພັກແຂວງ, ນະຄອນຫຼວງວຽງຈັນ, ເມືອງ ແລະ ນະຄອນ ເປັນການນຳສູງສຸດ ຂອງທ້ອງຖິ່ນ ບໍ່ຄວບຕຳແໜ່ງຫົວໜ້າອົງການປົກຄອງ, ແຕ່ອາດຈະຄວບຕຳແໜ່ງປະທານສະພາປະຊາຊົນ ຫຼື ບໍ່ຄວບກໍ່ໄດ້ ຂຶ້ນກັບເງື່ອນໄຂຕົວຈິງ ຂອງແຕ່ລະທ້ອງຖິ່ນ;

ເພີ່ມຈຳນວນບຸກຄະລະກອນ ການນຳຂັ້ນສູງ ຂອງພັກ-ລັດ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນອອກສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ຫຼາຍຂຶ້ນ ເພື່ອໃຫ້ສະແດງອອກຢ່າງຈະແຈ້ງເຖິງທາດແທ້, ມູນເຊື້ອ ຂອງພັກເຮົາ ທີ່ມາຈາກປະຊາຊົນ ໂດຍປະຊາຊົນ ແລະ ເພື່ອປະຊາຊົນ. ພ້ອມກັນນັ້ນ ກໍ່ໃຫ້ຄົ້ນຄວ້າ, ກະກຽມຄວາມເປັນໄປໄດ້ເທື່ອລະກ້າວ ແລະ ຕາມສະພາບຄວາມເປັນຈິງ ໃນການສັບຊ້ອນ, ຈັດວາງ ພະນັກງານການນຳຫຼັກແຫຼ່ງ ທີ່ບໍ່ແມ່ນຄົນທ້ອງຖິ່ນນັ້ນ ໄປປະຈຳການ ຢູ່ໃນຕຳແໜ່ງເລຂາຄະນະພັກ, ຫົວໜ້າອົງການປົກຄອງ ຫຼື ຫົວໜ້າຂະແໜງການຈຳນວນໜຶ່ງ ເຊັ່ນ: ຂົງເຂດ ປກຊ-ປກສ, ສານ, ໄອຍະການ, ພາສີ, ອາກອນ, ກວດສອບ, ກວດກາ ແລະ ອື່ນໆ;

ຄົ້ນຄວ້າ, ສ້າງຕັ້ງກົງຈັກການປົກຄອງຕ່ຳສຸດ ຢູ່ຂັ້ນຮາກຖານ; ຕົກລົງໃຫ້ຈັດຕັ້ງຕາແສງ



สแกนด้วย CamScanner
สแกนด้วย CamScanner
ສະແກນດ້ວຍ CamScanner

ຄືນໃໝ່ ໃຫ້ສອດຄ່ອງກັບສະພາບການໃໝ່ ໂດຍອີງໃສ່ການສ້າງກຸ່ມບ້ານທີ່ມີຢູ່ປະຈຸບັນເປັນຫຼັກ. ຂັ້ນປົກຄອງນີ້ ມີກົງຈັກການຈັດຕັ້ງ ແລະ ປະກອບລັດຖະກອນຢ່າງເໝາະສົມ, ໝາຍຄວາມວ່າ ການປົກຄອງທ້ອງຖິ່ນ ຢູ່ ສປປ ລາວ ໃຫ້ມີ 3 ຂັ້ນ ຄື: ແຂວງ, ເມືອງ ແລະ ຕາແສງ, ສ່ວນບ້ານ ເປັນການຈັດຕັ້ງ ຂອງຊຸມຊົນ ໂດຍມີການເລືອກຕັ້ງ ຕາມກົດໝາຍກ່ຽວຂ້ອງ;

ບົນພື້ນຖານການປ່ຽນແປງໃໝ່ດັ່ງກ່າວ ມີຄວາມຈຳເປັນຕ້ອງໄດ້ຄົ້ນຄວ້າ, ປັບປຸງຄືນໃໝ່ ຊື່ເອີ້ນຕຳແໜ່ງບໍລິຫານ-ການປົກຄອງ ເປັນຕົ້ນ ເຈົ້າແຂວງ, ເຈົ້າເມືອງ,... ໄປສູ່ລະບົບຄະນະກຳມະການປົກຄອງ (ປະທານປົກຄອງ); ນອກນັ້ນ ຍັງຕ້ອງປ່ຽນຊື່ເອີ້ນຕຳແໜ່ງບໍລິຫານ ຫຼື ຕຳແໜ່ງວິຊາການ ຢູ່ຂົງເຂດສະຖາບັນການສຶກສາ ແລະ ອື່ນໆ ໃຫ້ສອດຄ່ອງກັບລະບອບການເມືອງ ຂອງປະເທດເຮົາ;

5). ສ້າງການຫັນປ່ຽນ ແຂງແຮງ, ເລິກເຊິ່ງ ໃນຂົງເຂດເສດຖະກິດ-ສັງຄົມ:

ສືບຕໍ່ສ້າງເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ ທີ່ມີການນຳພາ ຂອງພັກ, ການຄຸ້ມຄອງ-ດັດສົມ ຂອງລັດ, ເຄົາລົບ ແລະ ປະຕິບັດກົດເກນ ຂອງເສດຖະກິດຕະຫຼາດຢ່າງຖືກຕ້ອງ; ພັດທະນາເສດຖະກິດເປັນເຈົ້າຕົນເອງ, ເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ໃຫ້ເປັນຮູບປະທຳຫຼາຍຂື້ນ ທັງຢູ່ໃນສູນກາງ ແລະ ທ້ອງຖິ່ນ, ກວດກາຄືນ ນະໂຍບາຍ ຊຸກຍູ້, ສົ່ງເສີມຕໍ່ບັນດາພາກສ່ວນເສດຖະກິດໃຫ້ເຂັ້ມແຂງ ໂດຍສະເພາະພາກສ່ວນເສດຖະກິດລັດເປັນເຈົ້າພາທາງ, ທຸກພາກສ່ວນເສດຖະກິດເຄື່ອນໄຫວແຂ່ງຂັນ ແລະ ສະເໝີພາບຕໍ່ໜ້າກົດໝາຍ ເພື່ອແນໃສ່ສ້າງຄວາມເຂັ້ມແຂງ, ໜັກແໜ້ນ ໃຫ້ແກ່ພື້ນຖານເສດຖະກິດແຫ່ງຊາດ;

ສ້າງແຜນແມ່ບົດການພັດທະນາແບບກວມລວມ ຢູ່ແຕ່ລະບໍລິເວນເຂດແຄວ້ນ, ບັນດາແຂວງ ເພື່ອພັດທະນາຢ່າງມີຈຸດສຸມ ແລະ ເປັນລະບົບ; ໃນນີ້ ຕ້ອງຄົ້ນຄວ້າ ກຳນົດມາດຕະຖານ ເພື່ອກ້າວໄປສູ່ການຄຸ້ມຄອງ, ສົ່ງເສີມ ບັນດານະຄອນ ໃຫ້ພັດທະນາໄວ ແລະ ທັນສະໄໝ; ໃຫ້ກຳນົດມາດຕະຖານ ຂອງແຂວງ ແລະ ນະຄອນ ທີ່ສາມາດເປັນທ້ອງຖິ່ນຂື້ນກັບສູນກາງ ໂດຍກົງ ແນໃສ່ສ້າງເປັນຫົວຈັກແກ່ດຶງການພັດທະນາ ຂອງເຂດແຄວ້ນ ແລະ ຂອງປະເທດ ສູ່ລະດັບພັດທະນາໄວ, ໝັ້ນທ່ຽງ;

ຄົ້ນຄວ້າ ແລະ ສ້າງລະບອບ, ລະບຽບໂດຍໄວ ເພື່ອພັດທະນາ, ຍົກລະດັບການບໍລິການ ຢູ່ດ່ານສາກົນ, ຈຸດຄ່ຽນຖ່າຍຂົນສົ່ງສິນຄ້າ ຕາມດ່ານສາກົນ ໃຫ້ສະດວກ, ທັນສະໄໝ ແລະ ຮັບປະກັນຄວາມໝັ້ນຄົງ ຂອງຊາດ;

ຂຸດຄົ້ນ ແລະ ເສີມຂະຫຍາຍທ່າແຮງ, ຄວາມສາມາດບົ່ມຊ້ອນທີ່ມີຢູ່ ໂດຍສະເພາະ ຊັບພະຍາກອນທຳມະຊາດ ຕິດພັນກັບການຫັນເປັນທັນສະໄໝ ແລະ ຫັນເປັນດີຈີຕອນ ໃຫ້ເປັນຂະແໜງເສດຖະກິດ "ປາຍແຫຼມ" ແລະ ເກີດປະສິດທິຜົນສູງສຸດ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ແກ່ພື້ນຖານເສດຖະກິດແຫ່ງຊາດ, ສ້າງຄວາມຮັ່ງມີໃຫ້ປະເທດຊາດ ແລະ ປະຊາຊົນ, ກາຍເປັນແຫຼ່ງລາຍຮັບ (ຊັບສິນ) ທີ່ມີປະສິດທິພາບ, ຍືນຍົງ ແລະ ເປັນແຫຼ່ງສະສົມທຶນຮອນ ເພື່ອດັດສົມເສດຖະກິດແຫ່ງຊາດ;

ອອກນະໂຍບາຍ ກ່ຽວກັບການສົ່ງເສີມ, ກໍ່ສ້າງ, ພັດທະນາ ຊັບພະຍາກອນມະນຸດ ແລະ ຄຸ້ມຄອງ, ນຳໃຊ້ປັນຍາຊົນ, ນັກຄົ້ນຄວ້າ, ນັກວິທະຍາສາດທຳມະຊາດ-ສັງຄົມ, ນັກວິຊາການ, ນັກທຸລະກິດ-ຜູ້ປະກອບການຄົນລາວ ທີ່ໄດ້ມາດຕະຖານສາກົນ ແລະ ໃຫ້ມີຈຳນວນຫຼາຍຂື້ນ,



สแกนด้วย CamScanner

ຕັ້ງໜ້າເຂົ້າຮ່ວມຂະບວນການພັດທະນາ, ການສ້າງຜະລິດຕະພັນ, ສ້າງຍີ່ຫໍ້ສິນຄ້າ; ພ້ອມກັນນັ້ນ ກໍ່ວາງນະໂຍບາຍ, ກົນໄກ, ມາດຕະການສະເພາະ ເພື່ອກໍ່ສ້າງ, ສົ່ງເສີມ ນຳໃຊ້ກຸ່ມແກວປັນຍາຊົນກ້າວໜ້າ (ນັກຄົ້ນຄວ້າ, ນັກວິທະຍາສາດ, ນັກທຸລະກິດທີ່ດີເດັ່ນ) ເພື່ອເລືອກເຟັ້ນ ແລະ ຄັດຈ້ອນ ຜູ້ທີ່ຄົບມາດຕະຖານ, ເງື່ອນໄຂ ເຂົ້າເປັນສະມາຊິກພັກ ກໍ່ຄື ເຂົ້າໃນໂຄງປະກອບຄະນະພັກ, ຄະນະນຳ ໃນສະພາບໍລິຫານລັດວິສາຫະກິດ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ກໍ່ຄືໃນກົງຈັກ ຂອງພັກ-ລັດ ຢູ່ແຕ່ລະຂັ້ນ ຕາມເງື່ອນໄຂຕົວຈິງ.

**2.2.2. ສືບຕໍ່ຍູ້ແຮງການສ້າງການຫັນປ່ຽນ ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນວຽກງານຈຸດສຸມ ທີ່ກຳນົດອອກໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX.**

ບົນຈິດໃຈ ແຫ່ງຄວາມຮັບຜິດຊອບສູງຕໍ່ພາລະກິດປະຕິວັດ ແລະ ຊະຕາກຳ ຂອງປະເທດຊາດ, ຄວາມເດັດດ່ຽວ ແລະ ຕັດສິນໃຈສູງ ໃນການສືບຕໍ່ນຳພາຊີ້ນຳ ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃຫ້ມີຜົນສຳເລັດ ນັ້ນ ຄະນະບໍລິຫານງານສູນກາງພັກ ມອບໃຫ້ກົມການເມືອງສູນກາງພັກ ສືບຕໍ່ນຳພາຊີ້ນຳຢ່າງໃກ້ຊິດ, ແທດເຖິງ ແລະ ເປັນລະບົບກວ່າເກົ່າ ຕໍ່ຄະນະພັກ ກະຊວງ, ອົງການ ແລະ ທ້ອງຖິ່ນຕ່າງໆ ໃຫ້ສຸມໃສ່ຈັດຕັ້ງປະຕິບັດບັນດາວຽກງານຈຸດສຸມ ກໍ່ຄື ຄວາມເລັ່ງທວງ ຂອງສະພາບການ ໃນຂອບເຂດຄວາມຮັບຜິດຊອບ ຂອງແຕ່ລະອົງຄະນະພັກ ໃຫ້ເຂົ້າສູ່ລວງເລິກ ແລະ ມີປະສິດທິຜົນ, ລະອຽດໄດ້ກຳນົດບັນຫາຈຳນວນໜຶ່ງໄວ້ໃນແຜນພັນຂະຫຍາຍ ຂອງມະຕິສະບັບນີ້.

**3. ການຈັດຕັ້ງປະຕິບັດ**

1). ຄະນະພັກແຕ່ລະຂັ້ນ ຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນ ເນື້ອໃນຈິດໃຈມະຕິສະບັບນີ້ໃຫ້ເລິກເຊິ່ງ ແລະ ຖືເປັນໜ້າທີ່, ຄວາມຮັບຜິດຊອບການເມືອງ ໃນການພັນຂະຫຍາຍເຂົ້າສູ່ວຽກງານ ຂອງຂະແໜງການ ແລະ ທ້ອງຖິ່ນຕົນ;

2). ມອບໃຫ້ກົມການເມືອງ, ຄະນະເລຂາທິການສູນກາງພັກ ຊີ້ນຳການອອກແຜນດຳເນີນງານລະອຽດ ຕໍ່ແຕ່ລະບັນຫາຢ່າງຈະແຈ້ງ, ມອບຄວາມຮັບຜິດຊອບໃຫ້ພາກສ່ວນຕ່າງໆ, ວາງໄລຍະເວລາຈັດຕັ້ງປະຕິບັດໜ້າທີ່, ວຽກງານຈຸດສຸມທີ່ກຳນົດອອກສູ່ລວງເລິກ ແລະ ເປັນຮູບປະທຳໂດຍໄວ; ບັນຫາຈຳນວນໜຶ່ງທີ່ມີລັກສະນະຍຸດທະສາດ ຕ້ອງໄດ້ຮັບການຄົ້ນຄວ້າ, ປັບປຸງ ແລະ ສ້າງນິຕິກຳຮອງຮັບ ເພື່ອກະກຽມໃຫ້ເປັນລະບົບຕັ້ງແຕ່ດຽວນີ້ໄປ;

3). ກົມການເມືອງ, ຄະນະເລຂາທິການສູນກາງພັກ ຕິດຕາມ, ຊຸກຍູ້ ແລະ ຊີ້ນຳການຈັດຕັ້ງປະຕິບັດ ມະຕິ ແລະ ແຜນດຳເນີນງານ ຂອງບັນດາອົງຄະນະພັກກ່ຽວຂ້ອງຢ່າງໃກ້ຊິດ, ເຮັດໃຫ້ແຂງແຮງ ແລະ ເປັນລະບົບ ຕໍ່ເນື່ອງ;

4). ສະພາແຫ່ງຊາດ, ລັດຖະບານ ຊີ້ນຳພາກສ່ວນທີ່ກ່ຽວຂ້ອງ ຮີບຮ້ອນຈັດຕັ້ງພັນຂະຫຍາຍ ມະຕິ ແລະ ແຜນດຳເນີນງານເພື່ອພັນຂະຫຍາຍ ມະຕິສະບັບນີ້ ໃຫ້ເປັນແຜນປະຕິບັດອັນລະອຽດ, ຈະແຈ້ງ.

5). ຄະນະພັກ ກະຊວງ, ອົງການ ແລະ ທ້ອງຖິ່ນ ມີໜ້າທີ່ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ເປັນປະຈຳເດືອນ, ໄຕມາດ, 6 ເດືອນ ຕໍ່ສະຫາຍເລຂາທິການໃຫຍ່, ຜູ້ປະຈຳການ ຄະນະເລຂາທິການສູນກາງພັກ ໂດຍຜ່ານຫ້ອງວ່າການສູນກາງພັກ ແລະ ຕໍ່ກົມການ



สแกนด้วย CamScanner
สแกนด้วย CamScanner
ສະແກນດ້ວຍ CamScanner

ເມືອງສູນກາງພັກ ໃຫ້ເປັນປົກກະຕິ; ໃຫ້ສະຫຼຸບຕີລາຄາຜົນການຈັດຕັ້ງປະຕິບັດ ເພື່ອລາຍງານຕໍ່ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ໃນທ້າຍປີ 2024 ແລະ ທ້າຍປີ 2025 ເພື່ອກວດກາ ແລະ ໃຫ້ທິດຊີ້ນໍາຕື່ມ;

6). ມອບໃຫ້ຫ້ອງວ່າການສູນກາງພັກ, ບັນດາຄະນະ ຂອງສູນກາງພັກ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຕິດຕາມ, ກວດກາ ແລະ ປະເມີນຜົນຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດ ເພື່ອລາຍງານຂໍທິດຊີ້ນໍາ ຕໍ່ກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ເປັນແຕ່ລະໄລຍະ.

ຕ.ຄະນະບໍລິຫານງານສູນກາງພັກ
ເລຂາທິການໃຫຍ່

ທອງລຸນ ສີສຸລິດ



สแกนด้วย CamScanner
สแกนด้วย CamScanner
ສະແກນດ້ວຍ CamScanner